ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 292 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 15 ທັນວາ 2017

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍລະບົບການຊຳລະ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 064/ສພຊ, ລົງວັນທີ 07 ພະຈິກ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍລະບົບການຊຳລະ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 028/ຄປຈ, ລົງວັນທີ 04 ທັນວາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍລະບົບການຊຳລະ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 064 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 07 / 11 / 17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍລະບົບການຊຳລະ

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍລະບົບການຊຳລະ ໃນວາລະກອງປະຊຸມ ຄັ້ງວັນທີ 7 ພະຈິກ 2017.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍລະບົບການຊຳລະ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 32 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 7 ພະຈິກ 2017

# ກົດໝາຍ
# ວ່າດ້ວຍລະບົບການຊຳລະ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານລະບົບການຊຳລະ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບຄວາມສະດວກ, ວ່ອງໄວ, ປອດໄພ, ໂປ່ງໃສ, ທັນສະໄໝ ແລະ ມີປະສິດທິພາບ ແນໃສ່ຮັກສາສະຖຽນລະພາບທາງດ້ານການເງິນ-ເງິນຕາ, ຮັບປະກັນການສົ່ງເສີມການຄ້າ, ການບໍລິການ, ການລົງທຶນ, ການເຂົ້າເຖິງການບໍລິການທາງດ້ານການເງິນ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ລະບົບການຊຳລະ**

ລະບົບການຊຳລະ ແມ່ນ ການເຄື່ອນໄຫວທັງໝົດກ່ຽວກັບການບໍລິການຊຳລະ ທີ່ປະກອບດ້ວຍ ການສັ່ງຈ່າຍ, ການໂອນ ແລະ ການມອບ-ຮັບເງິນ ລະຫວ່າງ ຜູ້ຈ່າຍ ແລະ ຜູ້ຮັບ ດ້ວຍການນຳໃຊ້ເຄື່ອງມືການຊຳລະ ຫຼື ຜ່ານກົນໄກການຊຳລະ ຂອງຜູ້ຄວບຄຸມລະບົບການຊຳລະ ແລະ ຜູ້ໃຫ້ບໍລິການຊຳລະ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ບັດເງິນຝາກ (Debit Card) ໝາຍເຖິງ ບັດທີ່ອອກໃຫ້ແກ່ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີເງິນຝາກຢູ່ທະນາຄານທຸລະກິດ ຫຼື ສະຖາບັນການເງິນຈຸລະພາກ;
2. ບັດສິນເຊື່ອ (Credit Card) ໝາຍເຖິງ ບັດທີ່ອອກໃຫ້ແກ່ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ເປີດວົງເງິນກູ້ ນຳທະນາຄານທຸລະກິດ;
3. ລະຫັດຄິວອາ (Quick Response Code-QR Code) ໝາຍເຖິງ ສັນຍາລັກ ຫຼື ລະຫັດຢັ້ງຢືນຕົວຕົນ ເພື່ອດຳເນີນທຸລະກຳການເງິນທາງເອເລັກໂຕຣນິກ;

4. **ຕູ້ຝາກ-ຖອນເງິນສົດ** (Automatic Teller Machine-ATM) ໝາຍເຖິງ ຕູ້ທີ່ໃຊ້ສຳລັບ ຝາກ-ຖອນເງິນສົດ, ກວດກາຍອດເງິນໃນບັນຊີ ແລະ ໂອນເງິນ ແບບອັດຕະໂນມັດ;

5. **ຕູ້ຝາກເງິນສົດ** (Cash Deposit Machine-CDM) ໝາຍເຖິງ ຕູ້ທີ່ໃຊ້ສຳລັບຮັບຝາກເງິນສົດ ແບບອັດຕະໂນມັດ;

6. **ເຄື່ອງພີໂອເອສ** (Point of Sale-POS) ໝາຍເຖິງ ອຸປະກອນຮັບບັດ ໃນຮ້ານຄ້າ ຫຼື ສະຖານທີ່ໃຫ້ບໍລິການຕ່າງໆ ທີ່ໃຊ້ກັບບັດເງິນຝາກ ແລະ ບັດສິນເຊື່ອ ເພື່ອຊຳລະ ຄ່າສິນຄ້າ ແລະ ບໍລິການ;

7. **ຮຸ້ນ** ໝາຍເຖິງ ທຶນຂອງບໍລິສັດຊຶ່ງຜູ້ຖືຮຸ້ນມີຖານະເປັນເຈົ້າຂອງບໍລິສັດ, ມີສິດ ແລະ ຜົນປະໂຫຍດຕາມອັດຕາສ່ວນຮຸ້ນທີ່ຕົນຖື;

8. **ຮຸ້ນກູ້** ໝາຍເຖິງ ການກູ້ຢືມຂອງບໍລິສັດ ຊຶ່ງຜູ້ຖືຮຸ້ນກູ້ມີຖານະເປັນເຈົ້າໜີ້ ຈະໄດ້ຮັບການຊຳລະຄືນທັງຕົ້ນທຶນ ແລະ ດອກເບ້ຍຕາມທີ່ໄດ້ກຳນົດໄວ້ໃນໃບຮຸ້ນກູ້;

9. **ສູນຮັບຝາກຫຼັກຊັບ** ໝາຍເຖິງ ການຈັດຕັ້ງທີ່ ຮັບຝາກ ແລະ ຄຸ້ມຄອງບັນຊີຫຼັກຊັບ, ໄລ່ລຽງເງິນສຳລັບການຊື້-ຂາຍຫຼັກຊັບ;

10. **ສູນຊຳລະແຊັກ** ໝາຍເຖິງ ການຈັດຕັ້ງທີ່ ໃຫ້ບໍລິການ ຮັບ, ສົ່ງ ແລະ ໄລ່ລຽງແຊັກ;

11. **ລະຫັດທະນາຄານ** (Bank Identification Number-BIN) ໝາຍເຖິງ ກຸ່ມຕົວເລກທີ່ຢູ່ດ້ານໜ້າຂອງບັດເງິນຝາກ ແລະ ບັດສິນເຊື່ອ;

12. **ເງິນລະດົມ** ໝາຍເຖິງ ເງິນທີ່ຜູ້ໃຊ້ບໍລິການຈ່າຍກ່ອນ (Prepaid) ແກ່ຜູ້ໃຫ້ບໍລິການເງິນເອເລັກໂຕຣນິກ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານລະບົບການຊຳລະ**

ລັດ ຊຸກຍູ້, ສົ່ງເສີມການພັດທະນາວຽກງານລະບົບການຊຳລະ ໃຫ້ເຂັ້ມແຂງ, ທັນສະໄໝ, ສະດວກ, ປອດໄພ ດ້ວຍການວາງນະໂຍບາຍທີ່ສອດຄ່ອງ, ສ້າງພື້ນຖານໂຄງລ່າງ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ວັດຖຸປະກອນ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ອົງການຄຸ້ມຄອງວຽກງານລະບົບການຊຳລະ ແລະ ອົງການອື່ນທີ່ກ່ຽວຂ້ອງ ຕາມຄວາມເໝາະສົມ.

ລັດ ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຂົ້າຮ່ວມໃນການພັດທະນາ, ຄຸ້ມຄອງ ແລະ ນຳໃຊ້ລະບົບການຊຳລະ ເພື່ອຫຼຸດຜ່ອນການນຳໃຊ້ເງິນສົດ ແລະ ຈຳກັດການນຳໃຊ້ເງິນຕາຕ່າງປະເທດ.

**ມາດຕາ 5 ຫຼັກການເຄື່ອນໄຫວວຽກງານລະບົບການຊຳລະ**

ການເຄື່ອນໄຫວວຽກງານລະບົບການຊຳລະ ໃຫ້ປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

2. ຮັບປະກັນການຄຸ້ມຄອງການຈັດຕັ້ງປະຕິບັດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ຮັບປະກັນ ຄວາມປອດໄພ, ວ່ອງໄວ, ຊັດເຈນ ແລະ ມີປະສິດທິພາບ;

4. ມີຄວາມສະເໝີພາບ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;

5. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ໃຊ້ບໍລິການ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຂົ້າຮ່ວມການເຄື່ອນໄຫວໃນລະບົບການຊຳລະຂອງ ສປປ ລາວ ຢູ່ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມ, ເປີດກວ້າງການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານລະບົບການຊຳລະ ດ້ວຍການແລກປ່ຽນ ຂໍ້ມູນ ຂ່າວສານ, ບົດຮຽນ, ປະສົບການ ແລະ ເຕັກໂນໂລຊີ ເພື່ອພັດທະນາຊັບພະຍາກອນມະນຸດ, ລະບົບການຊຳລະໃຫ້ທັນສະໄໝ ແລະ ສາມາດເຊື່ອມໂຍງກັບລະບົບການຊຳລະຂອງພາກພື້ນ ແລະ ສາກົນ.

## ພາກທີ II
## ຍຸດທະສາດການພັດທະນາລະບົບການຊຳລະ

**ມາດຕາ 8 ຍຸດທະສາດການພັດທະນາລະບົບການຊຳລະ**

ຍຸດທະສາດການພັດທະນາລະບົບການຊຳລະ ແມ່ນ ການກຳນົດ ວິໄສທັດ ໄລຍະ ສິບຫ້າປີ, ແຜນຍຸດທະສາດການພັດທະນາລະບົບການຊຳລະ ໄລຍະ ສິບປີ ແລະ ແຜນງານ, ໂຄງການໃນການພັດທະນາ ໄລຍະ ຫ້າປີ ໂດຍສອດຄ່ອງກັບນະໂຍບາຍ, ວິໄສທັດ ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

ພັດທະນາລະບົບການຊຳລະໃຫ້ທັນສະໄໝ ແລະ ຂະຫຍາຍການນຳໃຊ້ເຄື່ອງມືການຊຳລະ ທີ່ບໍ່ແມ່ນເງິນສົດຢ່າງກວ້າງຂວາງ ແນໃສ່ຫຼຸດຜ່ອນການນຳໃຊ້ເງິນສົດ ແລະ ຈຳກັດການນຳໃຊ້ເງິນຕາຕ່າງປະເທດ, ສົ່ງເສີມການເຂົ້າເຖິງການບໍລິການທາງດ້ານການເງິນ, ຮັກສາສະຖຽນລະພາບເງິນຕາແຫ່ງຊາດ, ສອດຄ່ອງກັບຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາ ຂອງ ສປປ ລາວ ແລະ ຮັບປະກັນຄວາມກົມກຽວກັບຂະແໜງການອື່ນ.

**ມາດຕາ 9 ເນື້ອໃນຍຸດທະສາດການພັດທະນາລະບົບການຊຳລະ**

ຍຸດທະສາດການພັດທະນາລະບົບການຊຳລະ ມີ ເນື້ອໃນ ດັ່ງນີ້:

1. ສະຫຼຸບ, ສັງລວມ ສະພາບການພັດທະນາລະບົບການຊຳລະໃນໄລຍະຜ່ານມາ ພ້ອມດ້ວຍການຕີລາຄາດ້ານດີ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້;

2. ກຳນົດ ທິດທາງລວມ, ຄາດໝາຍສູ້ຊົນ ແລະ ຕົວຊີ້ວັດຕົ້ນຕໍ ສຳລັບການພັດທະນາລະບົບການຊຳລະ;

3. ກຳນົດ ນະໂຍບາຍ ແລະ ລະບຽບການ ເພື່ອຄຸ້ມຄອງ ແລະ ພັດທະນາລະບົບການຊຳລະ;

4. ພັດທະນາ ລະບົບການຊຳລະແຕ່ລະຮູບແບບ ແລະ ເຄື່ອງມືການຊຳລະ ໃຫ້ຂະຫຍາຍຕົວ ແລະ ແທດເໝາະກັບຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາຂອງ ສປປ ລາວ ແລະ ຮັບປະກັນການເຊື່ອມໂຍງການຊຳລະ ກັບພາກພື້ນ ແລະ ສາກົນ;

5. ສ້າງລະບົບປ້ອງກັນອາຊະຍາກຳທາງລະບົບຄອມພິວເຕີ;

6. ສ້າງຄວາມເຂັ້ມແຂງຂອງອົງການຄຸ້ມຄອງວຽກງານລະບົບການຊຳລະ ດ້ວຍການສ້າງບຸກຄະລາກອນ, ສ້າງລະບົບກົນໄກ ແລະ ວິທີການຄຸ້ມຄອງລະບົບການຊຳລະ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

7. ສ້າງກົນໄກການປະສານງານລະຫວ່າງ ຂະແໜງການທີ່ກ່ຽວຂ້ອງ ກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາ ໃຫ້ມີຄວາມຄ່ອງຕົວ;

8. ກຳນົດ ມາດຕະການ, ວິທີການ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດຍຸດທະສາດການພັດທະນາລະບົບການຊຳລະ ໃນແຕ່ລະໄລຍະ.

# ພາກທີ III
# ລະບົບການຊຳລະ
## ໝວດທີ 1
## ຮູບແບບລະບົບການຊຳລະ

### ມາດຕາ 10 ຮູບແບບລະບົບການຊຳລະ

ລະບົບການຊຳລະ ມີ ສາມ ຮູບແບບ ດັ່ງນີ້:

1. ລະບົບການຊຳລະແບບທັນທີ;
2. ລະບົບການຊຳລະທຸລະກຳຍ່ອຍ;
3. ລະບົບການຊຳລະທຸລະກຳຫຼັກຊັບ.

### ມາດຕາ 11 ລະບົບການຊຳລະແບບທັນທີ

ລະບົບການຊຳລະແບບທັນທີ (Real Time Gross Settlement) ແມ່ນ ລະບົບການໂອນເງິນແບບເອເລັກໂຕຣນິກ ເພື່ອໃຫ້ບໍລິການໂອນເງິນ ດ້ວຍການຫັກບັນຊີເທື່ອລະທຸລະກຳທັນທີ ເມື່ອໄດ້ຮັບຄຳສັ່ງຈ່າຍ.

ລະບົບການຊຳລະແບບທັນທີ ມີພຽງລະບົບດຽວ ຊຶ່ງທະນາຄານ ແຫ່ງ ສປປ ລາວ ເປັນຜູ້ສ້າງ, ພັດທະນາ ແລະ ຄຸ້ມຄອງ ຕາມລະບຽບການຂອງທະນາຄານ ແຫ່ງ ສປປ ລາວ.

### ມາດຕາ 12 ລະບົບການຊຳລະທຸລະກຳຍ່ອຍ

ລະບົບການຊຳລະທຸລະກຳຍ່ອຍ (Automatic Clearing House) ແມ່ນ ລະບົບການຊຳລະເງິນຜ່ານເຄື່ອງມືການຊຳລະ ດ້ວຍການໄລ່ລຽງ ແລະ ຫັກບັນຊີ ຫຼາຍທຸລະກຳພ້ອມກັນ ຕໍ່ວັນ ຫຼື ຫັກບັນຊີເທື່ອລະທຸລະກຳທັນທີ ເຊັ່ນ ລະບົບການຊຳລະດ້ວຍແຊັກ, ລະບົບການຊຳລະດ້ວຍບັດ, ລະບົບການຊຳລະຫຼັກຊັບ, ລະບົບການຊຳລະດ້ວຍເງິນເອເລັກໂຕຣນິກ.

ມາດຕາ 13 ລະບົບການຊໍາລະທຸລະກໍາຫຼັກຊັບ

ລະບົບການຊໍາລະທຸລະກໍາຫຼັກຊັບ (Securities Settlement System) ແມ່ນ ລະບົບການຊໍາລະເງິນແບບເອເລັກໂຕຣນິກ ໃນການຊື້-ຂາຍຫຼັກຊັບ ເປັນຕົ້ນ ພັນທະບັດລັດຖະບານ, ພັນທະບັດທະນາຄານ ແຫ່ງ ສປປ ລາວ, ຮຸ້ນ ແລະ ຮຸ້ນກູ້.

## ໝວດທີ 2
## ເຄື່ອງມືການຊໍາລະ

ມາດຕາ 14 ເຄື່ອງມືການຊໍາລະ

ເຄື່ອງມື ທີ່ນໍາໃຊ້ໃນລະບົບການຊໍາລະ ມີ ດັ່ງນີ້:

1. ເງິນສົດ;
2. ບັດ;
3. ແຊັກ;
4. ເງິນໂອນ;
5. ເງິນເອເລັກໂຕຣນິກ.

ໃນກໍລະນີຈໍາເປັນ ທະນາຄານ ແຫ່ງ ສປປ ລາວ ສາມາດກໍານົດເຄື່ອງມືການຊໍາລະອື່ນຕື່ມອີກກໍໄດ້.

ການອອກ ບັດ, ເງິນໂອນ ແລະ ເງິນເອເລັກໂຕຣນິກ ຕ້ອງໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ.

ມາດຕາ 15 ເງິນສົດ

ເງິນສົດ ແມ່ນ ເຄື່ອງມືການຊໍາລະ ທີ່ປະກອບດ້ວຍ ທະນະບັດ ແລະ ເງິນຫຼຽນ ຊຶ່ງນໍາໃຊ້ເຂົ້າໃນການຊໍາລະຄ່າສິນຄ້າ, ຄ່າບໍລິການ ແລະ ໜີ້ສິນອື່ນ.

ຫຼັກການ ແລະ ການຄຸ້ມຄອງການນໍາໃຊ້ເງິນສົດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 16 ບັດ

ບັດ ແມ່ນເຄື່ອງມືການຊໍາລະ ທີ່ປະກອບດ້ວຍ ບັດເງິນຝາກ ແລະ ບັດສິນເຊື່ອ ຊຶ່ງນໍາໃຊ້ເຂົ້າໃນການຊໍາລະຄ່າສິນຄ້າ, ຄ່າບໍລິການ ແລະ ທຸລະກໍາການເງິນ ຜ່ານເຄື່ອງຮັບບັດ ເຊັ່ນ ເຄື່ອງບັດພີໂອເອັສ, ຕູ້ຝາກ-ຖອນເງິນສົດ ຫຼື ຕູ້ຝາກເງິນສົດ ແລະ ອິນເຕີເນັດ ຕາມການກໍານົດຂອງຜູ້ໃຫ້ບໍລິການຊໍາລະ.

ການຊໍາລະດ້ວຍບັດ ສາມາດດໍາເນີນພາຍໃນເຄືອຂ່າຍດຽວກັນ ຫຼື ຂ້າມເຄືອຂ່າຍ ຂອງຜູ້ໃຫ້ບໍລິການຊໍາລະ ທັງພາຍໃນ ແລະ ຕ່າງປະເທດ.

ການອອກບັດ ຕ້ອງມີເລກບັດ ລວມທັງລະຫັດທະນາຄານທີ່ອອກບັດ ໂດຍສອດຄ່ອງກັບການກໍານົດຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການສາກົນ.

ຫຼັກການ, ຂອບເຂດການນໍາໃຊ້, ວິທີການ ແລະ ການຄຸ້ມຄອງບັດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 17 ແຊັກ

ແຊັກ ແມ່ນ ເຄື່ອງມືການຊໍາລະ ທີ່ນໍາໃຊ້ເຂົ້າໃນການຊໍາລະ ຄ່າສິນຄ້າ, ຄ່າບໍລິການ ແລະ ໜີ້ສິນອື່ນ.

ປະເພດຕົ້ນຕໍຂອງແຊັກ ມີ ແຊັກບົ່ງຊື່ຜູ້ຮັບ, ແຊັກບໍ່ບົ່ງຊື່ຜູ້ຮັບ, ແຊັກຈ່າຍເຂົ້າບັນຊີ ແລະ ແຊັກເດີນທາງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດນໍາໃຊ້ແຊັກເຂົ້າໃນການຊໍາລະ ຄ່າສິນຄ້າ, ບໍລິການ ແລະ ໜີ້ສິນອື່ນ ຊຶ່ງຜູ້ສັ່ງຈ່າຍ ຕ້ອງຮັບຜິດຊອບຕໍ່ການສັ່ງຈ່າຍຕາມຈໍານວນເງິນທີ່ໄດ້ຂຽນໃສ່ໃນໃບແຊັກ ຕໍ່ຜູ້ຮັບແຊັກ ຫຼື ຜູ້ຖືແຊັກ.

ຜູ້ມີສິດອອກແຊັກ ປະກອບດ້ວຍ ທະນາຄານ ແຫ່ງ ສປປ ລາວ, ທະນາຄານທຸລະກິດ, ຄັງເງິນແຫ່ງຊາດ ແລະ ສະຖາບັນການເງິນທີ່ຮັບເງິນຝາກ ທີ່ໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ ຊຶ່ງຕ້ອງເປັນສະມາຊິກ ຂອງສູນຊໍາລະແຊັກ.

ຜູ້ຊໍາລະແຊັກ ມີໜ້າທີ່ໄລ່ລຽງແຊັກ ໃຫ້ສະມາຊິກຂອງຕົນ ເພື່ອເຮັດໃຫ້ການຊໍາລະດ້ວຍແຊັກຢູ່ໃນສັງຄົມ ມີຄວາມຄ່ອງຕົວ.

ເນື້ອໃນຂອງໃບແຊັກ, ວິທີການນໍາໃຊ້ແຊັກ, ການຢັ້ງຢືນ ແລະ ການຄໍ້າປະກັນແຊັກ, ພັນທະ ຂອງຜູ້ອອກ ແລະ ຜູ້ໃຊ້ບໍລິການແຊັກ ແລະ ການຄຸ້ມຄອງແຊັກ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 18 ເງິນໂອນ

ເງິນໂອນ (Fund Transfer) ແມ່ນ ເຄື່ອງມືການຊໍາລະ ທີ່ຜູ້ຈ່າຍເງິນ ນໍາໃຊ້ເພື່ອໂອນເງິນໄປໃຫ້ຜູ້ຮັບເງິນ ຜ່ານລະບົບເອເລັກໂຕຣນິກ ຊຶ່ງດໍາເນີນດ້ວຍເງິນໂອນ ທີ່ອອກຄໍາສັ່ງໂອນໂດຍຜູ້ຈ່າຍເງິນ ຫຼື ເງິນໂອນທີ່ອອກຄໍາສັ່ງໂອນໂດຍຜູ້ຮັບເງິນ.

ການຊໍາລະດ້ວຍເງິນໂອນ ສາມາດດໍາເນີນພາຍໃນເຄືອຂ່າຍດຽວກັນ ຫຼື ຂ້າມເຄືອຂ່າຍ ຂອງຜູ້ໃຫ້ບໍລິການຊໍາລະ ທັງພາຍໃນ ແລະ ຕ່າງປະເທດ.

ວິທີການນໍາໃຊ້, ຂັ້ນຕອນການດໍາເນີນງານ ແລະ ການຄຸ້ມຄອງເງິນໂອນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 19 ເງິນເອເລັກໂຕຣນິກ

ເງິນເອເລັກໂຕຣນິກ (Electronic Money) ແມ່ນ ເຄື່ອງມືການຊໍາລະ ທີ່ມີມູນຄ່າເງິນບັນຈຸໄວ້ໃນແຖບແມ່ເຫຼັກ (Magnetic), ຊິມ (Subscriber Identity Module-SIM) ຫຼື ໂປຣແກຣມ ຊຶ່ງຜູ້ໃຊ້ບໍລິການເອົາເງິນສົດ ຫຼື ເງິນຝາກ ຊື້ເງິນເອເລັກໂຕຣນິກ ນໍາຜູ້ໃຫ້ບໍລິການຊໍາລະ ເພື່ອນໍາໃຊ້ເຂົ້າໃນການຊໍາລະ ຄ່າສິນຄ້າ, ຄ່າບໍລິການ ແລະ ໜີ້ສິນອື່ນ. ຫົວໜ່ວຍເງິນເອເລັກໂຕຣນິກ ຕ້ອງເປັນເງິນກີບເທົ່ານັ້ນ.

ການສົ່ງ, ການຮັບ ແລະ ການຍົກເລີກ ຄໍາສັ່ງການຊໍາລະຄ່າສິນຄ້າ ແລະ ຄ່າບໍລິການ ດ້ວຍການນໍາໃຊ້ເງິນເອເລັກໂຕຣນິກ ຕ້ອງປະຕິບັດຕາມຂັ້ນຕອນ ແລະ ວິທີການທີ່ຜູ້ໃຫ້ບໍລິການຊໍາລະ ວາງອອກຢ່າງເຂັ້ມງວດ.

ຜູ້ໃຫ້ບໍລິການຊໍາລະດ້ວຍເງິນເອເລັກໂຕຣນິກ ບໍ່ສາມາດນໍາໃຊ້ເງິນລະດົມໄດ້ຈາກຜູ້ໃຊ້ບໍລິການ ເພື່ອສະໜອງສິນເຊື່ອດ້ວຍຕົນເອງ, ຜ່ານສະຖາບັນການເງິນໃດໜຶ່ງ ຫຼື ສະໜອງສິນເຊື່ອໃຫ້ແກ່ຜູ້ຄວບຄຸມລະບົບການຊໍາລະຂອງຕົນ.

ຜູ້ຄວບຄຸມລະບົບການຊໍາລະ ແລະ ຜູ້ໃຫ້ບໍລິການຊໍາລະ ດ້ວຍເງິນເອເລັກໂຕຣນິກ ຕ້ອງປະຕິບັດລະບຽບການຄວບຄຸມຄວາມສ່ຽງ ທາງດ້ານການດໍາເນີນງານ ແລະ ດ້ານເຕັກໂນໂລຊີ ຕາມລະບຽບການຂອງທະນາຄານ ແຫ່ງ ສປປ ລາວ.

ການຈໍາໜ່າຍເງິນເອເລັກໂຕຣນິກ ສາມາດດໍາເນີນການໂດຍຜູ້ໃຫ້ບໍລິການຊໍາລະໂດຍກົງ ຫຼື ຜ່ານຕົວແທນກໍໄດ້.

### ມາດຕາ 20 ຜົນສັກສິດຂອງການຊໍາລະດ້ວຍເຄື່ອງມືການຊໍາລະ

ການຊໍາລະດ້ວຍເງິນສົດ ແລະ ເຄື່ອງມືການຊໍາລະທີ່ບໍ່ແມ່ນເງິນສົດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 15, 16, 17, 18 ແລະ 19 ຂອງກົດໝາຍສະບັບນີ້ ແມ່ນມີຄຸນຄ່າເທົ່າທຽມກັນ ແລະ ຖືກຕ້ອງຕາມກົດໝາຍ.

ການຊໍາລະດ້ວຍເຄື່ອງມືທີ່ບໍ່ແມ່ນເງິນສົດ ຈະມີຜົນສັກສິດໄດ້ເຕັມສ່ວນ ກໍຕໍ່ເມື່ອເງິນໃນບັນຊີຂອງຜູ້ຈ່າຍເງິນ ໄດ້ຖືກຫັກ ແລະ ໂອນເຂົ້າບັນຊີຂອງຜູ້ຮັບເງິນ.

## ໝວດທີ 3
## ກົນໄກ, ການຄໍ້າປະກັນ ແລະ ຜົນ ການຊໍາລະ

### ມາດຕາ 21 ກົນໄກການຊໍາລະ

ກົນໄກການຊໍາລະ ແມ່ນ ຂະບວນການຊໍາລະ ຊຶ່ງມີ ດັ່ງນີ້:

1. ການສັ່ງຈ່າຍ;
2. ການໄລ່ລຽງ;
3. ການຫັກບັນຊີ.

### ມາດຕາ 22 ການສັ່ງຈ່າຍ

ການສັ່ງຈ່າຍ ແມ່ນ ການອອກຄໍາສັ່ງໂອນເງິນ ດ້ວຍເອກະສານ ຫຼື ເຄື່ອງມືເອເລັກໂຕຣນິກ ເຊັ່ນ ໂທລະສັບ, ຄອມພິວເຕີ, ເຄື່ອງພີໂອເອັສ, ຕູ້ຖອນເງິນສົດ.

### ມາດຕາ 23 ການໄລ່ລຽງ

ການໄລ່ລຽງ ແມ່ນ ການປຽບທຽບ ແລະ ຈັດລຽງມູນຄ່າທຸລະກໍາ ລະຫວ່າງ ສາຂາ ຫຼື ຕົວແທນ ຂອງຜູ້ໃຫ້ບໍລິການຊໍາລະ ທີ່ຢູ່ໃນເຄືອຂ່າຍດຽວກັນ ຫຼື ລະຫວ່າງຜູ້ໃຫ້ບໍລິການຊໍາລະ ທີ່ຂ້າມເຄືອຂ່າຍ ເພື່ອຄິດໄລ່ຍອດເຫຼືອສຸດທິ ແລ້ວນໍາໄປຫັກບັນຊີ.

ການໄລ່ລຽງທຸລະກໍາທີ່ຂ້າມເຄືອຂ່າຍ ຕ້ອງປະຕິບັດຕາມລະບຽບການ ທີ່ອອກໂດຍຜູ້ຄວບຄຸມລະບົບການຊໍາລະ ທີ່ໄດ້ຮັບຮອງຈາກທະນາຄານ ແຫ່ງ ສປປ ລາວ.

### ມາດຕາ 24 ການຫັກບັນຊີ

ການຫັກບັນຊີ ແມ່ນ ການຕັດເງິນອອກຈາກບັນຊີຂອງຜູ້ຈ່າຍເງິນ ແລ້ວເອົາເງິນເຂົ້າໃນບັນຊີຂອງຜູ້ຮັບເງິນ.

ການຫັກບັນຊີ ມີ ສອງ ປະເພດ ດັ່ງນີ້:

1. ການຫັກບັນຊີຕາມຈຳນວນສັ່ງຫັກ ຊຶ່ງແມ່ນການຫັກບັນຊີທັນທີເປັນແຕ່ລະທຸລະກຳ ໂດຍຫັກບັນຊີຕາມຄຳສັ່ງໂອນ ທີ່ເກີດຂຶ້ນທັນທີທີ່ໄດ້ຮັບຄຳສັ່ງຈ່າຍເປັນແຕ່ລະລາຍການ;

2. ການຫັກບັນຊີສຸດທິ ຊຶ່ງແມ່ນການຫັກບັນຊີຕາມມູນຄ່າຍອດເຫຼືອສຸດທິ ໜຶ່ງຄັ້ງ ຫຼື ຫຼາຍຄັ້ງຕໍ່ວັນ ພາຍຫຼັງການໄລ່ລຽງ ຕາມການກຳນົດຂອງຜູ້ຄວບຄຸມລະບົບການຊຳລະ.

**ມາດຕາ 25 ການຄ້ຳປະກັນການຊຳລະ**

ຜູ້ຄວບຄຸມລະບົບການຊຳລະ ສາມາດຮຽກຮ້ອງໃຫ້ຜູ້ໃຫ້ບໍລິການຊຳລະ ນຳຫຼັກຊັບມາຄ້ຳປະກັນໃນການຫັກບັນຊີ ເພື່ອປ້ອງກັນຄວາມສ່ຽງໃນການຊຳລະ.

ຫຼັກຊັບຄ້ຳປະກັນ ປະກອບດ້ວຍ ບັນຊີເງິນຝາກ, ພັນທະບັດ, ຮຸ້ນກູ້, ໜັງສືຄ້ຳປະກັນຂອງທະນາຄານ ແລະ ຫຼັກຊັບປະເພດອື່ນ ທີ່ຖືກຕ້ອງຕາມກົດໝາຍ ແລະ ການກຳນົດຂອງທະນາຄານແຫ່ງ ສປປ ລາວ.

ຫຼັກຊັບທີ່ນຳມາຄ້ຳປະກັນ ຈະຖອນຄືນໄດ້ ກໍຕໍ່ເມື່ອມີການຫັກບັນຊີສຳເລັດ.

**ມາດຕາ 26 ຜົນຂອງການຊຳລະ**

ການຊຳລະທີ່ມີຄຳສັ່ງທາງເອເລັກໂຕຣນິກ ໄດ້ສົ່ງເຂົ້າໃນລະບົບການຊຳລະໃດໜຶ່ງແລ້ວ ບໍ່ວ່າໃນກໍລະນີໃດກໍຕາມ ບໍ່ສາມາດໂຈະ, ດັດແກ້, ຍົກເລີກ, ຖອນ ຫຼື ຄັດຄ້ານ.

ໃນກໍລະນີການຊຳລະຜິດພາດ ຫຼື ບໍ່ຖືກຕ້ອງ ຜູ້ຈ່າຍເງິນ ສາມາດສະເໜີໃຫ້ຜູ້ໃຫ້ບໍລິການຊຳລະ ແກ້ໄຂຜົນຂອງການຊຳລະໄດ້ຕາມກົດໝາຍ ພາຍຫຼັງສິ້ນສຸດຂັ້ນຕອນການຊຳລະແລ້ວ.

## ພາກທີ IV
## ຜູ້ຄວບຄຸມລະບົບການຊຳລະ, ຜູ້ໃຫ້ບໍລິການຊຳລະ ແລະ ຜູ້ໃຊ້ບໍລິການ

### ໝວດທີ 1
### ຜູ້ຄວບຄຸມລະບົບການຊຳລະ

**ມາດຕາ 27 ຜູ້ຄວບຄຸມລະບົບການຊຳລະ**

ຜູ້ຄວບຄຸມລະບົບການຊຳລະ ແມ່ນ ຜູ້ປະຕິບັດໜ້າທີ່ການໄລ່ລຽງ ແລະ ການຫັກບັນຊີ ໃນລະບົບການຊຳລະໃດໜຶ່ງ.

ທະນາຄານ ແຫ່ງ ສປປ ລາວ ເປັນຜູ້ຄວບຄຸມລະບົບການຊຳລະແບບທັນທີ ແລະ ລະບົບການຊຳລະການຊື້ ແລະ ຂາຍ ພັນທະບັດລັດຖະບານ ແລະ ພັນທະບັດທະນາຄານ ແຫ່ງ ສປປ ລາວ.

ທະນາຄານທຸລະກິດ ຫຼື ນິຕິບຸກຄົນທີ່ໄດ້ຮັບອະນຸຍາດ ຈາກທະນາຄານ ແຫ່ງ ສປປ ລາວ ເປັນຜູ້ຄວບຄຸມລະບົບການຊຳລະທຸລະກຳຍ່ອຍ.

ສູນຮັບຝາກຫຼັກຊັບ ເປັນຜູ້ຄວບຄຸມລະບົບການຊຳລະທຸລະກຳຫຼັກຊັບ ເປັນຕົ້ນ ຮຸ້ນ ແລະ ຮຸ້ນກູ້.

**ມາດຕາ 28 ເງື່ອນໄຂການເປັນຜູ້ຄວບຄຸມລະບົບການຊໍາລະ**

ຜູ້ມີຈຸດປະສົງສ້າງຕັ້ງເປັນນິຕິບຸກຄົນ ເພື່ອເປັນຜູ້ຄວບຄຸມລະບົບການຊໍາລະ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍວິສາຫະກິດ.

ຜູ້ມີຈຸດປະສົງ ເປັນຜູ້ຄວບຄຸມລະບົບການຊໍາລະ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ;
2. ມີຖານະການເງິນທີ່ໝັ້ນຄົງ ແລະ ທຶນໃນການດໍາເນີນກິດຈະການ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ;
3. ມີບົດວິພາກເສດຖະກິດ-ເຕັກນິກ;
4. ມີລະບົບເຕັກນິກທີ່ທັນສະໄໝ ແລະ ປອດໄພ;
5. ມີຜູ້ບໍລິຫານທີ່ມີຄຸນວຸດທິ ແລະ ປະສົບການທາງດ້ານການເງິນ-ການທະນາຄານ, ເຕັກໂນໂລຊີ ຂໍ້ມູນຂ່າວສານ ຫຼື ຂະແໜງການທີ່ກ່ຽວຂ້ອງ ແລະ ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ໃນສະຖານການກະທໍາຜິດໂດຍເຈດຕະນາ ເປັນຕົ້ນ ການກະທໍາຜິດທາງດ້ານ ການເງິນ, ການທະນາຄານ, ການຟອກເງິນ;
6. ມີລະບົບດໍາເນີນງານ, ລະບົບກວດສອບ ແລະ ຄວບຄຸມພາຍໃນ ທີ່ສອດຄ່ອງກັບລະບຽບການຂອງທະນາຄານແຫ່ງ ສປປ ລາວ;
7. ມີສະຖານທີ່ຕັ້ງ ທີ່ເໝາະສົມ;
8. ມີພະນັກງານທີ່ມີຄວາມຮູ້ທາງດ້ານເຕັກໂນໂລຊີຂໍ້ມູນ ຂ່າວສານ;
9. ມີລະບຽບການກ່ຽວກັບການນໍາໃຊ້ລະບົບການຊໍາລະ;
10. ມີກົນໄກປ້ອງກັນ ຄວາມສ່ຽງທາງດ້ານການດໍາເນີນງານ ແລະ ຄວາມຜິດພາດທາງດ້ານເຕັກນິກລວມທັງແຜນປ້ອງກັນເຫດສຸກເສີນ;
11. ມີເງື່ອນໄຂອື່ນ ຕາມການກໍານົດຂອງທະນາຄານ ແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

ຜູ້ຄວບຄຸມລະບົບການຊໍາລະ ຕ່າງປະເທດ ທີ່ມີຈຸດປະສົງໃຫ້ບໍລິການຊໍາລະ ຢູ່ ສປປ ລາວ ຕ້ອງຮ່ວມມືກັບຜູ້ໃຫ້ບໍລິການຊໍາລະ ຢູ່ ສປປ ລາວ ໂດຍປະຕິບັດຕາມເງື່ອນໄຂຂອງທະນາຄານ ແຫ່ງ ສປປ ລາວ.

**ມາດຕາ 29 ສິດ ແລະ ພັນທະຂອງຜູ້ຄວບຄຸມລະບົບການຊໍາລະ**

ຜູ້ຄວບຄຸມລະບົບການຊໍາລະ ມີ ສິດ ແລະ ພັນທະ ດັ່ງນີ້:

1. ສ້າງລະບຽບການກ່ຽວກັບ ການດໍາເນີນງານ ແລະ ການຄວບຄຸມລະບົບການຊໍາລະຂອງຕົນ;
2. ຄວບຄຸມ ແລະ ຕິດຕາມກວດກາ ລະບົບການຊໍາລະຂອງຕົນ;
3. ຈ້າງນິຕິບຸກຄົນອື່ນ ເພື່ອຊ່ວຍຄວບຄຸມລະບົບການຊໍາລະ ຕາມການອະນຸຍາດ ແລະ ລະບຽບການຂອງທະນາຄານ ແຫ່ງ ສປປ ລາວ;
4. ປະຕິບັດລະບຽບການກ່ຽວກັບຄວາມໝັ້ນຄົງທາງດ້ານການຊໍາລະ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ;
5. ກໍານົດ ແລະ ແຈ້ງຄ່າບໍລິການ, ເງື່ອນໄຂກ່ຽວກັບການໃຫ້ບໍລິການ ແລະ ເປີດເຜີຍຂໍ້ມູນ ດ້ວຍການສ້າງເປັນຄູ່ມືສະເພາະ ແລະ ໂຄສະນາເຜີຍແຜ່ ໃຫ້ຜູ້ໃຊ້ບໍລິການ;

6. ເກັບຮັກສາຂໍ້ມູນກ່ຽວກັບການດຳເນີນທຸລະກຳ;

7. ຮັບຜິດຊອບ ແລະ ໃຊ້ແທນຄ່າເສຍຫາຍທີ່ເກີດຈາກຄວາມຜິດພາດຂອງຕົນ;

8. ປະຕິບັດລະບອບການບັນຊີ ໃຫ້ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ;

9. ແກ້ໄຂຂໍ້ຂັດແຍ່ງທີ່ຕິດພັນກັບລະບົບການຊຳລະຂອງຕົນ;

10. ປະຕິບັດລະບອບການລາຍງານ ແລະ ສະໜອງຂໍ້ມູນ ໃຫ້ທະນາຄານ ແຫ່ງ ສປປ ລາວ;

11. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ຄວບຄຸມລະບົບການຊຳລະ ທີ່ມີຈຸດປະສົງເຊື່ອມຕໍ່ລະບົບຂອງຕົນ ກັບລະບົບຂອງຜູ້ຄວບຄຸມການຊຳລະຕ່າງປະເທດ ເພື່ອໃຫ້ບໍລິການຊຳລະ ລະຫວ່າງປະເທດ ຕ້ອງປະຕິບັດຕາມເງື່ອນໄຂຂອງທະນາຄານ ແຫ່ງ ສປປ ລາວ .

## ໝວດທີ 2
## ຜູ້ໃຫ້ບໍລິການຊຳລະ

### ມາດຕາ 30 ຜູ້ໃຫ້ບໍລິການຊຳລະ

ຜູ້ໃຫ້ບໍລິການຊຳລະ ແມ່ນ ທະນາຄານ ແຫ່ງ ສປປ ລາວ, ທະນາຄານທຸລະກິດ ຫຼື ນິຕິບຸກຄົນອື່ນທີ່ໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ ໃນການໃຫ້ບໍລິການຊຳລະໂດຍກົງ ແກ່ຜູ້ໃຊ້ບໍລິການ ຊຶ່ງມີລະບົບການຊຳລະທີ່ເປັນຂອງຕົນ ຫຼື ທີ່ເຊື່ອມຕໍ່ກັບລະບົບການຊຳລະ ຂອງຜູ້ຄວບຄຸມລະບົບການຊຳລະອື່ນ.

ທະນາຄານ ແຫ່ງ ສປປ ລາວ ເປັນຜູ້ໃຫ້ບໍລິການຊຳລະແບບທັນທີ ແຕ່ພຽງຜູ້ດຽວ.

ທະນາຄານທຸລະກິດ, ນິຕິບຸກຄົນອື່ນ ລວມທັງ ສະຖາບັນການເງິນຈຸລະພາກ, ສູນຮັບຝາກຫຼັກຊັບ ແລະ ບໍລິສັດຫຼັກຊັບ ເປັນຜູ້ໃຫ້ບໍລິການຊຳລະທຸລະກຳຍ່ອຍ ຫຼື ທຸລະກຳຫຼັກຊັບ.

### ມາດຕາ 31 ເງື່ອນໄຂການເປັນຜູ້ໃຫ້ບໍລິການຊຳລະ

ຜູ້ມີຈຸດປະສົງສ້າງຕັ້ງເປັນນິຕິບຸກຄົນ ເພື່ອເປັນຜູ້ໃຫ້ບໍລິການຊຳລະ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍວິສາຫະກິດ.

ຜູ້ມີຈຸດປະສົງ ເປັນຜູ້ໃຫ້ບໍລິການຊຳລະ ຕ້ອງປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 28 ວັກ 2 ແລະ ມີລະບົບປ້ອງກັນຊັບສິນ ທີ່ໄດ້ມາຈາກຜູ້ໃຊ້ບໍລິການ ຫຼື ຜ່ານຜູ້ໃຫ້ບໍລິການຊຳລະອື່ນ.

ໃນກໍລະນີຜູ້ໃຫ້ບໍລິການຊຳລະ ຫາກຕ້ອງການອອກເຄື່ອງມືການຊຳລະໃໝ່ ຕ້ອງຂໍອະນຸຍາດນຳທະນາຄານແຫ່ງ ສປປ ລາວ.

ຜູ້ໃຫ້ບໍລິການຊຳລະ ທີ່ມີຈຸດປະສົງເຊື່ອມຕໍ່ ກັບລະບົບຂອງຜູ້ຄວບຄຸມການຊຳລະໃດໜຶ່ງ ຢູ່ຕ່າງປະເທດ ເພື່ອນຳເອົາເຄື່ອງມືການຊຳລະ ມາໃຫ້ບໍລິການ ຢູ່ ສປປ ລາວ ຕ້ອງປະຕິບັດຕາມເງື່ອນໄຂທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດ.

### ມາດຕາ 32 ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການຊໍາລະ

ຜູ້ໃຫ້ບໍລິການຊໍາລະ ມີ ສິດ ແລະ ພັນທະ ດັ່ງນີ້:

1. ສ້າງລະບຽບການກ່ຽວກັບການດໍາເນີນງານ ແລະ ການບໍລິການຊໍາລະ ຂອງຕົນ;
2. ໃຫ້ບໍລິການຊໍາລະ ຕາມເຄື່ອງມືການຊໍາລະທີ່ໄດ້ຮັບອະນຸຍາດ;
3. ນໍາໃຊ້ຕົວແທນໃນການໃຫ້ບໍລິການຊໍາລະ ຕາມການກໍານົດຂອງທະນາຄານ ແຫ່ງ ສປປ ລາວ ໃນແຕ່ລະໄລຍະ;
4. ປະຕິບັດລະບຽບການກ່ຽວກັບຄວາມໝັ້ນຄົງທາງດ້ານການຊໍາລະ ຕາມການກໍານົດຂອງທະນາຄານ ແຫ່ງ ສປປ ລາວ;
5. ກໍານົດ ແລະ ແຈ້ງຄ່າບໍລິການ, ເງື່ອນໄຂກ່ຽວກັບການໃຫ້ບໍລິການ ແລະ ເປີດເຜີຍຂໍ້ມູນ ດ້ວຍການສ້າງເປັນຄູ່ມືສະເພາະ ແລະ ໂຄສະນາເຜີຍແຜ່ ໃຫ້ຜູ້ໃຊ້ບໍລິການ;
6. ເກັບຮັກສາຂໍ້ມູນກ່ຽວກັບການດໍາເນີນທຸລະກໍາ;
7. ຮັບຜິດຊອບ ແລະ ໃຊ້ແທນຄ່າເສຍຫາຍທີ່ເກີດຈາກຄວາມຜິດພາດຂອງຕົນ;
8. ປະຕິບັດລະບອບການບັນຊີ ໃຫ້ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ;
9. ແກ້ໄຂຂໍ້ຂັດແຍ່ງທີ່ຕິດພັນກັບການໃຫ້ບໍລິການຊໍາລະຂອງຕົນ;
10. ປະຕິບັດລະບອບການລາຍງານ ແລະ ສະໜອງຂໍ້ມູນ ໃຫ້ທະນາຄານ ແຫ່ງ ສປປ ລາວ;
11. ນໍາໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 3
## ຜູ້ໃຊ້ບໍລິການ

### ມາດຕາ 33 ຜູ້ໃຊ້ບໍລິການ

ຜູ້ໃຊ້ບໍລິການ ແມ່ນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ດໍາເນີນທຸລະກໍາ ຜ່ານຜູ້ໃຫ້ບໍລິການຊໍາລະ.

ທະນາຄານ ແຫ່ງ ສປປ ລາວ, ກະຊວງການເງິນ, ທະນາຄານທຸລະກິດ, ສູນຮັບຝາກຫຼັກຊັບ ເປັນຜູ້ໃຊ້ບໍລິການລະບົບການຊໍາລະແບບທັນທີ. ສໍາລັບສະຖາບັນການເງິນ ຫຼື ອົງການຈັດຕັ້ງທີ່ມີບົດບາດສໍາຄັນໃນຂະແໜງການເງິນ-ເງິນຕາ ຕ້ອງໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ.

ທະນາຄານທຸລະກິດ, ສະຖາບັນການເງິນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເປັນຜູ້ໃຊ້ບໍລິການລະບົບການຊໍາລະທຸລະກໍາຍ່ອຍ.

ຜູ້ລົງທຶນປະເພດ ບຸກຄົນ ແລະ ສະຖາບັນ ທັງພາຍໃນ ແລະ ຕ່າງປະເທດ ເປັນຜູ້ໃຊ້ບໍລິການ ລະບົບການຊໍາລະທຸລະກໍາຫຼັກຊັບ.

### ມາດຕາ 34 ສິດ ແລະ ພັນທະຂອງ ຜູ້ໃຊ້ບໍລິການ

ຜູ້ໃຊ້ບໍລິການ ມີ ສິດ ແລະ ພັນທະ ດັ່ງນີ້:

1. ເອົາຂໍ້ມູນທີ່ຈໍາເປັນ ຈາກຜູ້ໃຫ້ບໍລິການຊໍາລະ;

2. ສຶກສາຂໍ້ມູນ ກ່ຽວກັບເຄື່ອງມືການຊໍາລະ, ກົນໄກການຊໍາລະ, ຜູ້ຄວບຄຸມລະບົບການຊໍາລະ ແລະ ຜູ້ໃຫ້ບໍລິການຊໍາລະ;

3. ໄດ້ຮັບຂໍ້ມູນການເຄື່ອນໄຫວຂອງທຸລະກໍາ ຈາກຜູ້ໃຫ້ບໍລິການຊໍາລະ;

4. ນໍາໃຊ້ເຄື່ອງມືການຊໍາລະ ໃຫ້ຖືກຕ້ອງຕາມການກໍານົດຂອງຜູ້ໃຫ້ບໍລິການຊໍາລະ;

5. ໃຫ້ການຮ່ວມມືໃນການກວດກາຂອງທະນາຄານ ແຫ່ງ ສປປ ລາວ, ຜູ້ຄວບຄຸມລະບົບການຊໍາລະ ແລະ ຜູ້ໃຫ້ບໍລິການຊໍາລະ;

6. ທວງເອົາຄ່າເສຍຫາຍທີ່ເກີດຂຶ້ນ ໃນກໍລະນີເກີດຄວາມຜິດພາດຈາກການນໍາໃຊ້ລະບົບການຊໍາລະ;

7. ສະເໜີຜູ້ໃຫ້ບໍລິການຊໍາລະ, ຜູ້ຄວບຄຸມລະບົບການຊໍາລະ, ທະນາຄານ ແຫ່ງ ສປປ ລາວ, ສໍານັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ສານປະຊາຊົນ ເພື່ອແກ້ໄຂຂໍ້ຂັດແຍ່ງ;

8. ນໍາໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 35 ການປົກປ້ອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການ ຕ້ອງໄດ້ຮັບການບໍລິການຢ່າງມີຄຸນນະພາບ, ໂປ່ງໃສ ແລະ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ກັບຜູ້ໃຫ້ບໍລິການຊໍາລະ, ສາມາດສົ່ງຂ່າວປະກອບຄໍາເຫັນກ່ຽວກັບການໃຫ້ບໍລິການ ຕໍ່ຜູ້ໃຫ້ບໍລິການຊໍາລະ ຫຼື ອົງການທີ່ມີສິດອໍານາດ ແລະ ໄດ້ຮັບການປົກປ້ອງທາງດ້ານກົດໝາຍ.

## ພາກທີ V
## ການອະນຸຍາດເປັນຜູ້ຄວບຄຸມລະບົບການຊໍາລະ ແລະ ຜູ້ໃຫ້ບໍລິການຊໍາລະ

**ມາດຕາ 36 ການຂໍອະນຸຍາດ**

ນິຕິບຸກຄົນ ທີ່ມີຈຸດປະສົງເປັນ ຜູ້ຄວບຄຸມລະບົບການຊໍາລະ ແລະ/ຫຼື ຜູ້ໃຫ້ບໍລິການຊໍາລະ ຕ້ອງຍື່ນຄໍາຮ້ອງຕໍ່ທະນາຄານ ແຫ່ງ ສປປ ລາວ ເພື່ອຂໍອະນຸຍາດເຄື່ອນໄຫວວຽກງານລະບົບການຊໍາລະ.

**ມາດຕາ 37 ການພິຈາລະນາການຂໍອະນຸຍາດ**

ທະນາຄານ ແຫ່ງ ສປປ ລາວ ຕ້ອງພິຈາລະນາການຂໍອະນຸຍາດເປັນຜູ້ຄວບຄຸມລະບົບການຊໍາລະ ແລະ/ຫຼື ຜູ້ໃຫ້ບໍລິການຊໍາລະ ພາຍໃນເວລາ ສາມສິບ ວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງຢ່າງຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນໄປ.

**ມາດຕາ 38 ການນໍາໃຊ້ໃບອະນຸຍາດ**

ຜູ້ຄວບຄຸມລະບົບການຊໍາລະ ແລະ/ຫຼື ຜູ້ໃຫ້ບໍລິການຊໍາລະ ຕ້ອງນໍາໃຊ້ໃບອະນຸຍາດ ໃຫ້ຖືກຕ້ອງຕາມຂອບເຂດທີ່ໄດ້ຮັບອະນຸຍາດ ໂດຍບໍ່ມີສິດມອບ, ໂອນ ຫຼື ໃຫ້ບຸກຄົນອື່ນນໍາໃຊ້.

ໃບອະນຸຍາດ ມີອາຍຸການນໍາໃຊ້ຕາມການກໍານົດຂອງທະນາຄານ ແຫ່ງ ສປປ ລາວ ໃນແຕ່ລະໄລຍະ ຊຶ່ງສາມາດຕໍ່ໄດ້, ຖືກໂຈະ ຫຼື ຖອນ ຖ້າຫາກມີການລະເມີດກົດໝາຍ ຕາມແຕ່ລະກໍລະນີ.

# ພາກທີ VI
# ຂໍ້ຫ້າມ

**ມາດຕາ 39 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ອອກເຄື່ອງມືການຊຳລະທຸກປະເພດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ດຳເນີນການໃຫ້ບໍລິການຊຳລະທຸກຮູບແບບ ໂດຍບໍ່ໄດ້ຮັບອະນຸຍາດ;
3. ແອບອ້າງ ຫຼື ໂຄສະນາ, ບິດເບືອນ ທີ່ສ້າງຜົນເສຍຫາຍຕໍ່ລະບົບການຊຳລະ ແລະ ຜູ້ໃຊ້ບໍລິການ ແລະ ສ້າງຜົນເສຍຫາຍໃຫ້ແກ່ສັງຄົມ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 40 ຂໍ້ຫ້າມສຳລັບຜູ້ຄວບຄຸມລະບົບການຊຳລະ**

ຫ້າມຜູ້ຄວບຄຸມລະບົບການຊຳລະ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນກ່ຽວກັບທຸລະກຳຂອງຜູ້ໃຊ້ບໍລິການ ທີ່ດຳເນີນການໃນລະບົບການຊຳລະຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຄວບຄຸມລະບົບການຊຳລະ ທີ່ບໍ່ໄດ້ຮັບອະນຸຍາດ;
3. ກົດໜ່ວງ, ຖ່ວງດຶງ, ປົກປິດ ຫຼື ເຊື່ອງອຳຂໍ້ມູນ ກ່ຽວກັບການຊຳລະ;
4. ບິດເບືອນ, ປອມແປງເອກະສານ ຫຼື ຂໍ້ມູນ ກ່ຽວກັບທຸລະກຳ ແລະ ລະບົບການຊຳລະ;
5. ສະໜອງຂໍ້ມູນບໍ່ຄົບຖ້ວນ, ບໍ່ຖືກຕ້ອງຕາມຄວາມເປັນຈິງ, ລາຍງານຊັກຊ້າ ຫຼື ບໍ່ລາຍງານ;
6. ປະຕິເສດການຮ່ວມມື ໃນການກວດກາຂອງທະນາຄານ ແຫ່ງ ສປປ ລາວ ແລະ ເຈົ້າໜ້າທີ່ກ່ຽວຂ້ອງຂອງລັດ;
7. ປັ່ນປ່ວນ ລະບົບການຊຳລະແບບທັນທີ, ລະບົບການຊຳລະທຸລະກຳຍ່ອຍ, ລະບົບການຊຳລະທຸລະກຳຫຼັກຊັບ ແລະ/ຫຼື ເຮັດໃຫ້ເກີດຄວາມເສຍຫາຍ ຕໍ່ການດຳເນີນງານຂອງລະບົບການຊຳລະ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 41 ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການຊຳລະ**

ຫ້າມຜູ້ໃຫ້ບໍລິການຊຳລະ ມີພຶດຕິກຳ ດັ່ງນີ້:

1. ອອກເຄື່ອງມືການຊຳລະ ໂດຍບໍ່ໄດ້ຮັບອະນຸຍາດ;
2. ໃຫ້ບໍລິການຊຳລະ ເກີນຂອບເຂດທີ່ໄດ້ຮັບອະນຸຍາດ;
3. ໃຫ້ບໍລິການຊຳລະ ບໍ່ຖືກຕ້ອງກັບການເປີດເຜີຍຂໍ້ມູນ ຫຼື ໂຄສະນາ;
4. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດ;
5. ກົດໜ່ວງ, ຖ່ວງດຶງ, ປົກປິດ ຫຼື ເຊື່ອງອຳຂໍ້ມູນກ່ຽວກັບການຊຳລະ;

6. ດັດແປງ, ປອມແປງເອກະສານ ຫຼື ຂໍ້ມູນ ກ່ຽວກັບການຊໍາລະ;

7. ປະຕິເສດການຮ່ວມມື ໃນການກວດກາຂອງທະນາຄານ ແຫ່ງ ສປປ ລາວ, ຜູ້ຄວບຄຸມລະບົບການຊໍາລະ ແລະ ເຈົ້າໜ້າທີ່ຂອງລັດ;

8. ສະໜອງຂໍ້ມູນບໍ່ຄົບຖ້ວນ, ບໍ່ຖືກຕ້ອງຕາມຄວາມເປັນຈິງ, ລາຍງານຊັກຊ້າ ຫຼື ບໍ່ລາຍງານ;

9. ປັ່ນປ່ວນ ລະບົບການຊໍາລະແບບທັນທີ, ລະບົບການຊໍາລະທຸລະກໍາຍ່ອຍ, ລະບົບການຊໍາລະທຸລະກໍາຫຼັກຊັບ ແລະ/ຫຼື ເຮັດໃຫ້ເກີດຄວາມເສຍຫາຍຕໍ່ການດໍາເນີນງານຂອງລະບົບການຊໍາລະ;

10. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 42 ຂໍ້ຫ້າມສໍາລັບຜູ້ໃຊ້ບໍລິການ**

ຫ້າມຜູ້ໃຊ້ບໍລິການ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ລະບົບການຊໍາລະ ເຂົ້າໃນການເຄື່ອນໄຫວ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

2. ປັ່ນປ່ວນ ລະບົບການຊໍາລະແບບທັນທີ, ລະບົບການຊໍາລະທຸລະກໍາຍ່ອຍ, ລະບົບການຊໍາລະທຸລະກໍາຫຼັກຊັບ ແລະ/ຫຼື ເຮັດໃຫ້ເກີດຄວາມເສຍຫາຍ ຕໍ່ການດໍາເນີນງານຂອງລະບົບການຊໍາລະ;

3. ໃສ່ຮ້າຍປ້າຍສີຕໍ່ຜູ້ຄວບຄຸມລະບົບການຊໍາລະ ແລະ/ຫຼື ຜູ້ໃຫ້ບໍລິການຊໍາລະ;

4. ປະຕິເສດການຮ່ວມມື ໃນການກວດກາຂອງ ຜູ້ຄວບຄຸມລະບົບການຊໍາລະ, ຜູ້ໃຫ້ບໍລິການຊໍາລະ, ທະນາຄານແຫ່ງ ສປປ ລາວ ແລະ ເຈົ້າໜ້າທີ່ກ່ຽວຂ້ອງຂອງລັດ;

5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 43 ຂໍ້ຫ້າມສໍາລັບພະນັກງານຂອງອົງການຄຸ້ມຄອງວຽກງານລະບົບການຊໍາລະ**

ຫ້າມພະນັກງານຂອງອົງການຄຸ້ມຄອງວຽກງານລະບົບການຊໍາລະ ມີພຶດຕິກໍາ ດັ່ງນີ້:

1. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ກ່ຽວກັບການດໍາເນີນງານໃນລະບົບການຊໍາລະ ໂດຍບໍ່ໄດ້ຮັບອະນຸຍາດ;

2. ສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ບຸກຄົນອື່ນ;

3. ກົດໜ່ວງ, ຖ່ວງດຶງ, ປົກປິດ ຫຼື ເຊື່ອງອໍາຂໍ້ມູນ ກ່ຽວກັບລະບົບການຊໍາລະ;

4. ທວງເອົາ, ຂໍເອົາ, ຮັບ ຫຼື ໃຫ້ສິນບົນ ຫຼື ສິ່ງຕອບແທນອື່ນ;

5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 44 ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານລະບົບການຊໍາລະ ໃຫ້ດໍາເນີນຕາມຮູບການໃດໜຶ່ງ ດັ່ງນີ້:

1. ການແກ້ໄຂດ້ວຍການປະນີປະນອມ;

2. ການແກ້ໄຂທາງບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ;
5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 45 ການແກ້ໄຂດ້ວຍການປະນີປະນອມ**

ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບວຽກງານລະບົບການຊໍາລະ ຄູ່ກໍລະນີສາມາດແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ດ້ວຍການປຶກສາຫາລື ແລະ ປະນີປະນອມກັນ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

**ມາດຕາ 46 ການແກ້ໄຂທາງບໍລິຫານ**

ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບວຽກງານລະບົບການຊໍາລະ ທີ່ມີລັກສະນະບໍລິຫານ ຄູ່ກໍລະນີມີສິດສະເໜີ ຕໍ່ຜູ້ຄວບຄຸມລະບົບການຊໍາລະ, ຜູ້ໃຫ້ບໍລິການຊໍາລະ ແລະ ທະນາຄານແຫ່ງ ສປປ ລາວ ເພື່ອແກ້ໄຂຂໍ້ຂັດແຍ່ງ ທາງດ້ານບໍລິຫານ.

**ມາດຕາ 47 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບວຽກງານລະບົບການຊໍາລະ ຄູ່ກໍລະນີມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 48 ການຮ້ອງຟ້ອງຕໍ່ສານປະຊາຊົນ**

ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບວຽກງານລະບົບການຊໍາລະ ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

**ມາດຕາ 49 ການແກ້ໄຂທີ່ມີລັກສະນະສາກົນ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານລະບົບການຊໍາລະ ທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມກົດໝາຍຂອງ ສປປ ລາວ ຫຼື ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.